# ສົມມຸດຕິຖານຂອງ ຫວາງຫົງ





ໃນຕອນຄ່ຳຂອງ ວັນທີ 23 ກໍລະກົດ 2026 ຕາມເວລາປັກກິ່ງ, ກອງປະຊຸມໃຫຍ່ນັກຄະນິດສາດສາກົນ ທີ່ຈັດຂຶ້ນທຸກ 4 ປີ ໄດ້ເປີດຂຶ້ນທີ່ເມືອງຟີລາເດນເຟຍ ອາເມຣິກາ. ນາງ ຫວາງຫົງ ອາຍຸ 35 ປີ ໄດ້ຮັບລາງວັນ Fields Medal (ລາງວັນສູງສຸດຂອງວົງການຄະນິດສາດໂລກ) ຈາກມືຂອງຜູ້ມອບລາງວັນ, ໃນຂະນະທີ່ ແຜ່ນດິນມາຕຸພູມທີ່ຢູ່ໄກຢູ່ອີກຟາກໜຶ່ງຂອງມະຫາສະໝຸດ, ຕ່າງກໍສະແດງຄວາມຍິນດີຢ່າງຄຶກຄື້ນ. ໜຶ່ງປີປາຍກ່ອນໜ້ານັ້ນ, ນັກຄະນິດສາດຍິງຄົນຈີນຜູ້ນີ້ ໄດ້ກ້າວເຂົ້າສູ່ການເປັນທີ່ຮູ້ຈັກຕໍ່ສາທາລະນະ ຫຼັງຈາກນາງສາມາດແກ້ໄຂ ໂຈດ “Kakeya Set Conjecture” ໃນກໍລະນີ 3D ໄດ້ສຳເລັດ.

“Kakeya Set Conjec-ture” ແມ່ນໂຈດຍາກ ທີ່ສ້າງຄວາມເຈັບຫົວໃຫ້ແກ່ວົງການຄະນິດສາດສາກົນມາເປັນເວລາເກືອບຮ້ອຍປີ, ສາມາດອະທິບາຍໃຫ້ເຫັນພາບ ໂດຍຈິນຕະນາການວ່າ: ພວກເຮົາມີ “ເຂັມ” ໜຶ່ງອັນ ທີ່ບໍ່ມີຄວາມໜາ ແລະ ຕ້ອງໝຸນເຂັມນັ້ນໃຫ້ຄົບທຸກທິດທາງ. ຄຳຖາມກໍຄື: ຢ່າງໜ້ອຍທີ່ສຸດ ຕ້ອງໃຊ້ເນື້ອທີ່ຂະໜາດເທົ່າໃດຈຶ່ງຈະເຮັດແບບນີ້ໄດ້?

ຊີວິດຂອງ ຫວາງ ຫົງ ກໍບໍ່ຕ່າງຫຍັງຈາກ “ເຂັມ” ໂຕນັ້ນທີ່ໝຸນໄປຢ່າງບໍ່ຢຸດຢັ້ງ. ນາງເຄີຍອະທິບາຍຄະນິດສາດໄວ້ຕັ້ງແຕ່ສະໄໝຮຽນມັດທະຍົມວ່າ: “ເປັນສິ່ງບໍລິສຸດ ແລະ ເປັນນາມມະທຳປານນັ້ນ, ຫ່າງໄກຈາກຄວາມວຸ້ນວາຍຂອງໂລກ, ເປັນຜືນດິນບໍລິສຸດແຫ່ງໜຶ່ງໃນໂລກແຫ່ງຈິດວິນຍານຂອງພວກເຮົາ, ແຕ່ກໍບໍ່ແມ່ນເລື່ອງທີ່ເລື່ອນລອຍແຕ່ຢ່າງໃດ.” ໃນເວລານັ້ນ ອະນາຄົດຂອງນາງຍັງເປັນຄືກັບ ສົມມຸດຕິຖານທີ່ລໍຖ້າການອະທິບາຍ, ແຕ່ໃນຄ່ຳຄືນນີ້, ການໄດ້ຮັບການຍົກຍ້ອງຈາກເວທີສູງສຸດຂອງວົງການຄະນິດສາດ, ໄດ້ມອບ “ບົດພິສູດ” ທີ່ສະຫງ່າງາມທີ່ສຸດໃຫ້ແກ່ເສັ້ນທາງການຄົ້ນຫາຂອງນາງ.

## ຈຸດເລີ່ມຕົ້ນຂອງການໝຸນ

ທີ່ບ້ານຫູຕີ້ຊຽວ ຕາແສງຊາຈີ ເມືອງຜິງເລີ້ ນະຄອນກຸ້ຍຫຼິນ ເຂດປົກຄອງຕົນເອງຊົນເຜົ່າຈ້ວງກວາງຊີ, ແມ່ນທີ່ຕັ້ງເຮືອນເກົ່າຂອງຄອບຄົວ ຫວາງຫົງ. ໃນໄລຍະບຸນກຸດຈີນປີ 2024 ຫວາງຫົງ ໄດ້ເດີນທາງກັບບ້ານເກີດ. ທ່ານ ເສິນ ຢູເຜີຍ ຜູ້ເປັນລຸງໃຫຍ່ຂອງນາງຈື່ໄດ້ວ່າ, ບົດໜຶ່ງຫຼັງຈາກທັກທາຍພີ່ນ້ອງແລ້ວ, ຫຼານສາວກໍຫັນຫຼັງກັບເຂົ້າຫ້ອງ ເປີດຄອມພິວເຕີ ແລະ ຕັດຂາດຈາກສຽງອຶກກະທຶກພາຍນອກໃນທັນທີ. “ຄວາມສາມາດໃນການກັ້ນສິ່ງລົບກວນ” ທີ່ເກືອບຈະເປັນສັນຊາດຕະຍານນີ້, ອາດຍ້ອນກັບໄປຮອດຕອນທີ່ນາງອາຍຸ 4 ປີ ເມື່ອແຂນຂອງນາງຖືກນ້ຳຮ້ອນລວກຢ່າງຮຸນແຮງ. ຫຼັງຈາກນັ້ນຫຼາຍປີຕໍ່ມາ, ນາງຕ້ອງເຂົ້າຮັບການຜ່າຕັດປູກຖ່າຍຜິວໜັງຫຼາຍຄັ້ງ. ທ່ານ ຊຽວ ຟາງອູ່ ຜູ້ເປັນລຸງຝ່າຍແມ່ ມັກເຫັນນາງນອນຢູ່ເທິງຕຽງຄົນເຈັບ ແລະ ຮຽນໜັງສືດ້ວຍຕົນເອງ. “ເພາະຜິວໜັງຂອງນາງໄວຕໍ່ແສງ, ນາງຈຶ່ງລື້ງເຄີຍກັບການຢູ່ໃນຮົ່ມ ແລະ ໄດ້ຮຽນຮູ້ທີ່ຈະຢູ່ກັບຕົນເອງ.” ໃນຕອນທີ່ຮຽນຊັ້ນປະຖົມ ນາງຂ້າມຫ້ອງເຖິງ 2 ຄັ້ງ.

ທ່ານ ຫວາງ ອິ້ງເວີນ ຜູ້ເປັນພໍ່ ເປັນຄູສອນຄະນິດສາດຢູ່ໂຮງຮຽນມັດທະຍົມ ຊາຈີ ແລະ ເປັນຜູ້ພານາງເຂົ້າສູ່ໂລກແຫ່ງຄະນິດສາດ. ສ່ວນແມ່ ນາງ ຊຽວ ຮຸ່ນຫຼວນ ເປັນຄູສອນພາສາອັງກິດຢູ່ໂຮງຮຽນດຽວກັນ ແລະ ເປັນຜູ້ວາງຮາກຖານດ້ານພາສາໃຫ້ແກ່ລູກສາວ. “ຄະນິດສາດແມ່ນວິທີໜຶ່ງ ເພື່ອເຮັດໃຫ້ຂ້ອຍເຂົ້າໃຈໂລກ.” ນາງຍັງຄົງຮູ້ສຶກຂອບໃຈພໍ່ແມ່ຢູ່ສະເໝີ: “ພວກເຂົາໃຫ້ອິດສະຫຼະແກ່ຂ້ອຍຫຼາຍ, ເຮັດໃຫ້ຂ້ອຍໄດ້ເຮັດໃນສິ່ງທີ່ຕົນເອງຢາກເຮັດ.”

## “ນັກແກ້ໂຈດຈາກເມືອງນ້ອຍ” ທີ່ບໍ່ຄືໃຜ

ຢູ່ໂຮງຮຽນມັດທະຍົມຊາຈີ, ຫວາງຫົງ ມີຜົນການຮຽນໂດດເດັ່ນຕະຫຼອດສົກຮຽນ, ແຕ່ນາງເປັນ “ນັກແກ້ໂຈດຈາກເມືອງນ້ອຍ” ທີ່ບໍ່ຄືໃຜ. ຕອນຮຽນມັດທະຍົມຕົ້ນປີທີ 1 ນາງຂໍໃຫ້ແມ່ພາໄປນັ່ງຮຽນວິຊາເຄມີຂອງນັກຮຽນມັດທະຍົມຕົ້ນປີທີ 3. ແຕ່ຫຼັງຈາກລອງຮຽນຢູ່ໜຶ່ງອາທິດ ເນື່ອງຈາກເນື້ອໃນທີ່ຮຽນຂ້າມຂັ້ນເກີນໄປ ນາງກໍຕ້ອງຍອມຈຳນົນ. ຄູຟີຊິກຄົນໜຶ່ງ ເວົ້າວ່າ: “ວິທີແກ້ໂຈດຂອງ ນ້ອງຫວາງຫົງນັ້ນ ‘ນອກຂອບ’. ໂຈດງ່າຍໆ ນາງຄິດຢ່າງສັບສົນ, ແຕ່ໂຈດຍາກທີ່ຄົນອື່ນແກ້ບໍ່ອອກ ນາງພັດສາມາດໃຊ້ວິທີງ່າຍໆແກ້ໄດ້.”

ປີ 2004, ຫວາງຫົງ ອາຍຸ 13 ປີ ເຂົ້າຮຽນຫ້ອງ 235 ຂອງໂຮງຮຽນມັດທະຍົມກຸ້ຍຫຼິນ. ຄູອາຈານເຫັນວ່ານາງມີ “ຄວາມສະຫງົບທີ່ບໍ່ຄືກັບອາຍຸ”. ຖັງໝຽນ ຮົວ ຄູປະຈຳຫ້ອງໃນເວລານັ້ນ ຍັງມີຄວາມປະທັບໃຈຕໍ່ນາງຢ່າງເລິກເຊິ່ງ: “ໃນຫ້ອງຮຽນ ນາງມີສາຍຕາທີ່ຈົດຈໍ່ ແລະ ມັກຍົກມືຕອບຄຳຖາມຢ່າງກະຕືລືລົ້ນ.” ເຊຍ ໜິງໂປ ເພື່ອນຮ່ວມຫ້ອງຮຽນ (ເຊິ່ງປັດຈຸບັນເປັນຮອງສາດສະດາຈານຢູ່ມະຫາວິທະຍາໄລວິທະຍາສາດ ແລະ ເຕັກໂນໂລຊີ ເອເລັກໂຕຣນິກ ກຸ້ຍຫຼິນ) ສັງເກດເຫັນວ່າ ໃນຕອນທີ່ຄູຫາກໍ່ສອນຮອດບົດທີ 3, ປຶ້ມບົດເຝິກຫັດຂອງນາງພັດຂຽນໄປຮອດບົດທີ 5 ແລ້ວ. ກ່ອນເປີດພາກຮຽນໃໝ່ໃນແຕ່ລະເທີມ ນາງມັກຫາປຶ້ມຮຽນຫົວໃໝ່ມາອ່ານ ແລະ “ສ້າງຄວາມເຂົ້າໃຈ” ລ່ວງໜ້າ. ຖ້າພົບກັບໂຈດຍາກ ນາງຈະຄົ້ນຫາຂໍ້ມູນ ຄິດຄາດຄະເນດ້ວຍເຫດ ແລະ ຜົນຊ້ຳແລ້ວຊ້ຳອີກ, ໃຊ້ເວລາຫຼາຍມື້ກໍເປັນເລື່ອງປົກກະຕິ. ຄືກັບທີ່ນາງເຄີຍເວົ້າໃນເວລາຕໍ່ມາວ່າ: “ກໍພຽງແຕ່ຕັ້ງຄຳຖາມຢ່າງບໍ່ຢຸດເຊົາ, ແລ້ວພະຍາຍາມຊອກຫາຄຳຕອບດ້ວຍຕົນເອງ.”

ກ່ອນຈົບຊັ້ນມັດທະຍົມປີທີ 6, ຄູພາສາຈີນໄດ້ມອບໝາຍໃຫ້ນັກຮຽນຂຽນບົດຄວາມຢ່າງອິດສະຫຼະຕາມຫົວຂໍ້ທີ່ຕົນເອງກຳນົດ. ຫວາງຫົງ ສົ່ງຜົນງານທີ່ຊື່ວ່າ “ຄວາມງົດງາມຂອງຄະນິດສາດ”. “ຄວາມລຶກລັບຂອງຈັກກະວານທີ່ດຳລົງຢູ່ຢ່າງເປັນພາວະວິໄສ ແລະ ຄະນິດສາດທີ່ພັດທະນາຂຶ້ນດ້ວຍແນວຄິດຄຸນຄ່າຂອງຄຳວ່າ ‘ຄວາມງົດງາມ’ ຢ່າງບໍລິສຸດນັ້ນ, ພັດສອດຄ່ອງກັນຢ່າງສົມບູນ. ນັ້ນເຮັດໃຫ້ຜູ້ຄົນຮູ້ສຶກສະເທືອນໃຈຢ່າງປະຫຼາດ.” ນາງຕອນອາຍຸ 16 ປີໄດ້ກ່າວເຖິງຄຳເວົ້າ ຂອງນັກຄະນິດສາດຮຸ່ນກ່ອນ ສະແດງໃຫ້ເຫັນເຖິງສຽງສະທ້ອນຂອງຈິດວິນຍານຊາວໜຸ່ມທີ່ກຳລັງກ້າວເຂົ້າໃກ້ຄວາມຈິງທາງວິທະຍາສາດ.

## ການຄົ້ນຫາຄວາມສົງໄສໃນຕົນເອງ

ຫວາງຫົງ ເສັງເຂົ້າມະຫາວິທະຍາໄລປັກກິ່ງ ໄດ້ດ້ວຍຄະແນນທີ່ພໍດີກັບເສັ້ນຜ່ານ, ແຕ່ພັດພາດກັບສາຂາຄະນິດສາດທີ່ຕັ້ງໃຈໃຝ່ຝັນໄວ້. “ຄະນິດສາດ ໃນຂະນະໜຶ່ງ ກໍກາຍເປັນເລື່ອງຍາກຫຼາຍ.” ເມື່ອຕ້ອງປະເຊີນໜ້າ ກັບໝູ່ທີ່ເຄີຍຜ່ານການຝຶກຝົນສຳລັບການແຂ່ງຂັນຄະນິດສາດ, ນາງຜູ້ທີ່ຄຸ້ນເຄີຍກັບການຮຽນດ້ວຍຕົນເອງ ເລີ່ມສົງໄສໃນຄວາມສາມາດຂອງຕົນເອງ. “ຮູ້ສຶກຄືກຳລັງດົ້ນຣົນຢູ່ຕະຫຼອດເວລາ, ພຽງແຕ່ສາມາດຢູ່ລອດມາໄດ້ກໍຖືວ່າດີຫຼາຍແລ້ວ.” ແຕ່ນາງກໍບໍ່ອາດຕັດໃຈຈາກຄະນິດສາດໄດ້. ໃນປີທີ 2 ຂອງມະຫາວິທະຍາໄລ ນາງເສັງຜ່ານ ສຳລັບການຍ້າຍສາຂາ ແລະ ເຂົ້າຮຽນໃນຄະນະວິທະຍາສາດຄະນິດສາດໃນທີ່ສຸດ. ຖຽນ ກັງ ນັກວິຊາການ ສະຖາບັນວິທະຍາສາດຈີນ ກ່າວວ່າ:“ການຍ້າຍສາຂາໄດ້ສຳເລັດ, ໝາຍຄວາມວ່າໃນປີທີ 1 ນາງຕ້ອງຮຽນວິຊາຂອງສອງສາຂາພ້ອມກັນ, ຜົນການຮຽນໃນສາຂາເດີມກໍຕ້ອງບໍ່ຕ່ຳເກີນໄປ.” ແລະ ນາງກໍເຮັດໄດ້.

ເຖິງຢ່າງນັ້ນ, ຄວາມສົງໄສໃນຕົນເອງກໍຍັງເປັນເງົາຕິດຕາມນາງຢູ່ບໍ່ຫ່າງ. ໃນຊ່ວງທີ່ໄປຮຽນຕໍ່ທີ່ປາຣີ ນາງເຄີຍຢຸດເຮັດການຄົ້ນຄວ້າ ດ້ານຄະນິດສາດເປັນເວລາດົນເຖິງເຄິ່ງປີ, ແລ້ວຫັນໄປສົນໃຈວັນນະຄະດີ, ການແຕ້ມຮູບ ແລະ ສະຖາປັດຕະຍະກຳແທນ. ແຕ່ ນາງກໍຍັງກັບຄືນສູ່ອ້ອມກອດຂອງຄະນິດສາດ: “ໃນໂລກຂອງຄະນິດສາດ, ຂ້ອຍສາມາດສ້າງສິ່ງໃດກໍໄດ້ຢ່າງອິດສະຫຼະ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກໃຜ. ດັ່ງນັ້ນ ຂ້ອຍຈຶ່ງຄິດວ່າ ລອງອີກຈັກເທື່ອໜຶ່ງເທາະ.” ຈົນໄປຮອດຕອນໄປຮຽນລະດັບປະລິນຍາເອກທີ່ MIT (Massa-chusetts Institute of Tech-nology) ນາງກໍຍັງບໍ່ແນ່ໃຈວ່າຕົນເອງເກັ່ງພຽງແຕ່ການແກ້ໂຈດຫຼືບໍ່. ນາງຈຶ່ງມັກຂໍໃຫ້ອາຈານທີ່ປຶກສາມອບ “ໂຈດນ້ອຍໆ” ໃຫ້ເຮັດ, ເພື່ອຄ່ອຍໆສ້າງຄວາມໝັ້ນໃຈໃຫ້ຕົນເອງ.

ປີ 2019 ຫວາງຫົງ ເຂົ້າຮ່ວມສະຖາບັນການສຶກສາຂັ້ນສູງ Princeton ໃນຖານະນັກຄົ້ນຄວ້າຫຼັງປະລິນຍາເອກ, ຕົ້ນຕໍແມ່ນເນັ້ນການວິເຄາະ Fourier ແລະ ຄວາມເຊື່ອມໂຍງກັບບັນຫາທາງເລຂາຄະນິດ. ຊຸນ ຊົນ ໝູ່ຮ່ວມຊັ້ນຮຽນສະໄໝຮຽນປະລິນຍາຕີ ແລະ ສາດສະດາຈານມະຫາວິທະຍາໄລ ປັກກິ່ງ ເຫັນວ່າ ເວລານັ້ນເປັນຈຸດຫັນປ່ຽນສຳຄັນ: “ໃນຊ່ວງຫຼາຍປີທີ່ IAS, ນາງສະແຫວງຫາ ແລະ ຄົ້ນຄວ້າໄປມາ, ເຊິ່ງໄດ້ວາງຮາກຖານສຳຄັນໃຫ້ແກ່ການແກ້ ໂຈດ Kakeya Set Conjecture ໃນເວລາຕໍ່ມາ.” ສິ່ງທີ່ສະໜັບສະໜູນນາງບໍ່ໄດ້ມີພຽງຄວາມສາມາດໃນການແກ້ໄຂບັນຫາເທົ່ານັ້ນ, ແຕ່ຍັງລວມເຖິງຄວາມສົນໃຈໃນຄະນິດສາດທີ່ບໍ່ເຄີຍຈາງຫາຍ ຕະຫຼອດເຖິງຄວາມອົດທົນໃນການຄິດກັບຄືນມາຫາບັນຫາເດີມ ທີ່ຕ້ອງຜ່ານອຸປະສັກ, ການອ້ອມໄປວົນມາ ແລະ ຄວາມສົງໄສທີ່ຊ້ຳໄປຊ້ຳມາ.

ໃນງານຖະແຫຼງຂ່າວຫຼັງພິທີມອບລາງວັນ, ຫວາງຫົງ ໄດ້ໃຫ້ຄຳແນະນຳແກ່ນັກຮຽນຄົນໜຶ່ງທີ່ຖາມຄຳຖາມກັບນາງວ່າ: “ສິ່ງທີ່ຂ້ອຍຮຽນຮູ້ຈາກອະດີດ ກໍຄືພຽງແຕ່ໃນທ້າຍທີ່ສຸດເຮົາໄດ້ຮັບບາງສິ່ງບາງຢ່າງກັບຄືນມາ, ໄລຍະເວລາທີ່ໃຊ້ໄປດົນປານໃດກໍບໍ່ສຳຄັນ. ບາງເທື່ອຄົນອື່ນອາດຈະໄວກວ່າ, ແຕ່ເຈົ້າອາດຈະຊ້າກວ່າ, ມັນກໍບໍ່ເປັນຫຍັງແທ້ໆ.”

ໃນຕອນທີ່ເວົ້າປະໂຫຍກນີ້, ນາງກຳລັງຈະອອກເດີນທາງໄປສູ່ເສັ້ນທາງຂອງການຄາດຄະເນໃໝ່ອີກຄັ້ງ. “ດັ່ງນັ້ນ, ຢ່າຟ້າວ, ຄ່ອຍໆໄປເທື່ອລະກ້າວ.”

(ສະໜອງຂໍ້ມູນໂດຍ: ວາລະສານ “ຈຳປາ” ທີ່ຂຶ້ນກັບ ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສຽງໃຕ້ ແຂວງຢູນນານ)

www.yunnangateway.com